# ປະຊຸມແນະນຳໂປໂລເຫຼັ້ມ 2

(ກຈກ 15:22-35)

*ທ່ານຮຽນໂປໂລເຫຼັ້ມທີ 1 ແລ້ວ. ຫຼັກສູດນີ້ນສອນໄປເຖິງການປະຊຸມ ໃນກຸງເຢລູຊາເລັມ ໃນ ກຈກ ບົດທີ 15.*




ເພື່ອຢາກຮຽນຮູ້ເລື່ອງນີ້ໃຫ້ດີຈົ່ງອ່ານ ກຈກ 15:22-35

**1** ກ. ເຂົາລາຍງານເລື່ອງປະຊຸມຢູ່ໃສ? (ກຈກ 15:4) ____________________________

ຂ. ພາລະໜັກອັນໃດທີ່ການປະຊຸມນັ້ນບໍ່ຢາກວາງໃສ່ຄຼິດສະຕຽນຕ່າງຊາດຄືພາລະໃດ? (ກຈກ 15:5) ____________________________

ຄ. ເລື່ອງພາລະໜັກນັ້ນ ປະຊຸມໃນກຸງເຢລູຊາເລັມຕັດສິນໃຈຢ່າງໃດ? ______________

____________________________

**2** ກ. ຄຼິດສະຕະຈັກໃນກຸງເຢລູຊາເລັມເລືອກເອົາຜູ້ຕ່າງໜ້າສອງຄົນໄປບອກຂ່າວດີນີ້ໃຫ້ຄຼິດສະຕຽນ ທີ່ບໍ່ເປັນຊາດຢິວ. ຜູ້ຕ່າງໜ້າຜູ້ໜຶ່ງນັ້ນຊື່ວ່າ ຢູດາ (ບໍ່ແມ່ນຢູດາອິສະກາລິອົດ)ແລະອີກຄົນໜຶ່ງ ທີ່ຈະເດີນທາງໄປປະກາດພະທຳພ້ອມກັບໂປໂລ. ຄົນນັ້ນຊື່ຫຍັງ? (ກຈກ 15:22)____________________________

ຂ. ຜູ້ຕ່າງໜ້າທັງສອງນັ້ນ ຖືຫຍັງໄປດ້ວຍ? (ກຈກ 15:23) ______________________

____________________________

ຕອບ:

**1** *ກ. ເຢລູຊາເລັມ ຂ. ການຮັບພິທີຕັດແລະການຖືຮັກສາພະບັນຍັດຂອງໂມເຊ*
*ຄ. ບໍ່ເຫັນດີໃຫ້ວາງພາລະໜັກໃສ່ຄຼິດສະຕຽນຕ່າງຊາດ (ກຈກ 15:28)*

**2** *ກ. ຊີລາ (ກຈກ 15:22) ຂ. ຈົດໝາຍ (ກຈກ 15:23)*




**3** ດັ່ງນັ້ນທັງໂປໂລ ບາລະນາບາແລະຜູ້ຕ່າງໜ້າຄຼິດສະຕະຈັກໃນ ກຸງເຢລູຊາເລັມ ເດີນທາງໄປ. ໄປເຖິງແລ້ວ ເຂົາເອົາຈົດໝາຍນັ້ນ ໃຫ້ຄຼິດສະຕະຈັກ. (ໃຫ້ເບິ່ງແຜນທີ່)

ກ. ເຂົາເດີນທາງຈາກໃສໄປ? ____________________________

ຂ. ເດີນໄປເຖິງບ່ອນໃດ? ________________________________

ຄ. ເມື່ອຮັບແລະອ່ານຈົດໝາຍແລ້ວ ພີ່ນ້ອງທີ່ຕ້ອນຮັບ ເປັນຢ່າງໃດ? (ກຈກ 15:31) ____________________________________

**4** ກ. ແມ່ນຄຼິດສະຕະຈັກກຸງໃດທີ່ໃຊ້ຊີລາເປັນຜູ້ຕ່າງໜ້າເຂົາ? _______________________

ຂ. ຖ້າຢ່າງນັ້ນ ຊີລາເປັນຊາດໃດ? __________________________________________

**5** ຫຼັງຈາກປະຊຸມໃນກຸງເຢລູຊາເລັມແລ້ວ ເຫັນວ່າຄຼິດສະຕະຈັກທີ່ປະກອບດ້ວຍຊາດຢິວໃນ ກຸງເຢລູຊາເລັມ ແລະ ຄຼິດສະຕະຈັກທີ່ປະກອບດ້ວຍຄົນບໍ່ເປັນຊາດຢິວໃນອັນຕີໂອເຂຍ, ຮ່ວມ ມືກັນດີຕໍ່ໄປ ຕົວຢ່າງ:

- ແທນທີ່ສອງຄຼິດສະຕະຈັກຈະແຂ່ງຂັນກັນ ເຂົາກັບສະໜັບສະໜູນຊ່ວຍເຫຼືອກັນ ເຊັ່ນຂຽນ ຈົດໝາຍ ໄປຫາກັນ. (ກຈກ 15:30)
- ຄຼິດສະຕຽນທີ່ບໍ່ເປັນຊາດຢິວໃນອັນຕີໂອເຂຍມີຄວາມຍິນດີໃນຄຳໜູນໃຈນັ້ນ (ກຈກ 15:31)
- ພີ່ນ້ອງຈາກຄຼິດສະຕະຈັກທັງສອງຝ່າຍໄປຫາກັນໄດ້ ແລະມີຄວາມສຸກຢູ່ດ້ວຍກັນ. (ກຈກ 15:32-33)
- ທັງສອງຄຼິດສະຕະຈັກຮ່ວມມືກັນໃນການປະກາດພະທຳ. (ກຈກ 15:40-41)

ຄຼິດສະຕະຈັກໃນສະຖານທີ່ທ່ານຢູ່ ມີການສາມັກຄີແລະການຮ່ວມມືເຖິງປານນັ້ນບໍ່. ຖ້າບໍ່ມີຈະ ສ້າງຄວາມສຳພັນໃຫ້ດີຂຶ້ນໄດ້ຢ່າງໃດ? ______________________________________

**6** ໃນການຮ່ວມມື 4 ປະການນັ້ນ. ທັງ 4 ປະການມີຜົນດີ ແລະແຕ່ມີປະການໜຶ່ງທີ່ເຫັນວ່າມີຜົນ ຢ່າງທົນທານຈົນ ເຖິງທຸກວັນນີ້ ໃນການປະກາດພະທຳໄປເຖິງຫຼາຍປະເທດ. ຄືອັນທີ່ເຫັນໃນ ບົດຂໍ້ໃດ? (ເລືອກ)

| | |
|---|---|
| ກຈກ 15:30 | ກຈກ 15:31 |
| ກຈກ 15:32-33 | ກຈກ 15:40-41 |

ຕອບ:

**3** *ກ. ເຢລູຊາເລັມ ຂ. ອັນຕີໂອເຂຍ ຄ. ມີຄວາມຍິນດີ.*

**4** *ກ. ເຢລູຊາເລັມ ຂ. ຢິວ*

**5** *(ບໍ່ມີຄຳຕອບຕາຍຕົວ)*

**6** *ກຈກ 15:40-41*

*ທັງສອງຄຼິດສະຕະຈັກມີສ່ວນໃນການອຸດໜູນໂປໂລແລະຊີລາອອກໄປປະກາດພະທຳ ແລ້ວໄດ້ຮັບຜົນດີຫຼາຍປະການຄື:*

- *ຫຼາຍຄົນມາຮັບເຊື່ອໃນພະອົງ*
- *ມີຄຼິດສະຕະຈັກໃໝ່ທີ່ສ້າງໄວ້ໃນຕ່າງປະເທດ*
- *ໃນເມື່ອໂປໂລເດີນທາງຢ່າງນັ້ນ ເພິ່ນຂຽນຈົດໝາຍຫຼາຍສະບັບທີ່ກາຍມາເປັນສ່ວນໜຶ່ງໃນພະຄຳພີໃໝ່.*
- *ເນື່ອງຈາກການອອກໄປປະກາດພະທຳນີ້ ລູກາບັນທຶກພະທຳກິດຈະການດ້ວຍ.*

**7** ຍ້ອນວ່າຄຼິດສະຕະຈັກທັງສອງນັ້ນ ເປັນຈິດໜຶ່ງໃຈດຽວກັນໃນການສະໜັບສະໜູນຜູ້ປະກາດພະທຳ ສະນັ້ນ ຂ່າວປະເສີດໄດ້ເຜີຍແຜ່ອອກໄປຢ່າງກວ້າງຂວາງ. ໃຫ້ອ່ານໂຢຮັນ 17:20-23. ພວກເຮົາທີ່ຮຽນພະຄຳພີນຳກັນນີ້ ຄວນຮ່ວມມືກັນຢ່າງໃດດີ? ____________

______________________________________________________________

*ໃຫ້ຮ່ວມກັນອ້ອນວອນ ຂໍຈາກພະເຈົ້າໃຫ້ເຮົາຮ່ວມມືເປັນຈິດໜຶ່ງໃຈດຽວກັນກັບພີ່ນ້ອງຄຼິດສະຕຽນຄົນອື່ນ ໆ.*

## ການບ້ານ

- *ເຖິງວ່າບົດນີ້ເປັນບົດແນະນຳກໍຕາມ ແຕ່ກໍ່ຍັງມີບົດເສັງ. ໃຫ້ທ່ານຕອບ ບົດເສັງນັ້ນ ກ່ອນຈະມາຮຽນເທື່ອໜ້າ.*
- *ທຳມະດາທຸກ ໆ ບົດຈະມີ ການບ້ານພາກຕົ້ນແລະການບ້ານພາກປາຍຕ່າງຫາກ ແຕ່ບົດນີ້ມີແຕ່ພາກດຽວ. ຍັງມີການປະຊຸມບົດທີໜຶ່ງຢູ່.*
- *ຢ່າລືມອ່ານເລື່ອງວິທີຮຽນການບ້ານກ່ອນບົດທີ 1 ແລ້ວກ່ອນຈະເສັງໃຫ້ທວນຄືນດີ ໆ.*

*ພົບກັນອີກໃນບົດຮຽນໜ້າ!*

ຕອບ:

**7** *(ໃຫ້ແລກປ່ຽນຄວາມຄິດເຫັນກັນ)*

## ວິທີຮຽນການບ້ານ

1 ເທື່ອໃດທີ່ທ່ານຈະຕອບຄຳຖາມໃດທີ່ຮູ້ດີກໍໃຫ້ຕອບໂລດ. ຖ້າເຫັນມີບົດຂໍ້ພະຄຳພີໃນວົງເລັບ ( ) ໃຫ້ຊອກຫາຂໍ້ພະຄຳພີນັ້ນອ່ານ ຈຶ່ງອາດຈະຮູ້ຕອບ. ຖ້າບໍ່ເຫັນບົດຂໍ້ໃນວົງເລັບພ້ອມກັບຄຳຖາມນັ້ນ ທ່ານອາດຈະຕ້ອງຊອກຫາຄຳຕອບໃນຕອນພະຄຳພີທີ່ຮຽນໃນເວລານັ້ນ. ຢ່າຟ້າວເປີດເບິ່ງຄຳຕອບ ຢູ່ລຸ່ມໜ້າເທື່ອ ໃຫ້ຕອບເອົາເອງກ່ອນ.

2 ໃຫ້ຂຽນຄຳຕອບໃນບ່ອນຫວ່າງ.

3 ຖ້າຕອບດີ ໆ ແລ້ວໃຫ້ເບິ່ງຄຳຕອບລຸ່ມໜ້ານັ້ນ ເພື່ອເຫັນວ່າຕອບຖືກຫຼືບໍ່. ຖ້າຕອບຖືກກໍດີ ຖ້າຕອບ ບໍ່ຖືກລຶບຄຳຕອບທີ່ຜິດອອກແລ້ວຂຽນຄຳຕອບທີ່ຖືກໃສ່ ແຕ່ໃຫ້ຂຽນ ຕົວ X ໄວ້ຂ້າງຂອບເຈ້ຍນັ້ນ.

## ວິທີທວນຄືນ

4 ຖ້າທ່ານຂຽນຄຳຕອບໃນປຶ້ມແລ້ວ ໃຫ້ກັບໄປທວນຄືນຈົນກວ່າຈະຈື່ກັບປາກໄດ້.

5 ຖ້າຮູ້ດີແລ້ວໃຫ້ເສັງເອົາຕາມແຕ່ລະບົດຮຽນ.